ໜ່ວຍງານສາທາລະນະສຸກແລະບໍລິການມະນຸດລັດຄາລິຟໍເນຍ
**ພະແນກບໍລິການດ້ານພັດທະນາການ**
1215 O Street, Sacramento, CA 95814
www.dds.ca.gov

DDS
PETE CERVINKA
*ຜູ້ອຳນວຍການ*

GAVIN NEWSOM
*ຜູ້ວ່າການລັດ*

# ເອກະສານຂໍ້ເທັດຈິງກ່ຽວກັບການຄຸ້ມຄອງຄວາມເປັນສ່ວນຕົວ

ພະແນກບໍລິການດ້ານພັດທະນາການລັດຄາລິຟໍເນຍ (ພະແນກ) ແລະສູນເຣຈິນັລ 21 ແຫ່ງສະໜັບສະໜູນຊ່ວຍເຫຼືອບຸຄຄົນທີ່ມີຄວາມພິການທາງປັນຍາແລະພັດທະນາການ (ບຸຄຄົນ) ຫຼາຍກວ່າ 500,000 ຄົນ. ການສະໜັບສະໜູນຊ່ວຍເຫຼືອແມ່ນສິ່ງຜ່ານການບໍລິການແລະຊັບພະຍາກອນທີ່ໄດ້ຮັບການອອກແບບມາສໍາລັບບຸຄຄົນແລະຄອບຄົວ, ຜູ້ຕາງໜ້າ ແລະຜູ້ສະໜັບສະໜູນຊ່ວຍເຫຼືອຂອງເຂົາເຈົ້າ.

ໃນຖານະທີ່ເປັນສ່ວນໜຶ່ງຂອງການອອກແບບແລະການສະໜອງບໍລິການເຫຼົ່ານີ້ ພະແນກແລະສູນເຣຈິນັລເກັບກໍາ, ເກັບຮັກສາ ແລະນໍາໃຊ້ສະເພາະຂໍ້ມູນສ່ວນບຸຄຄົນທີ່ຈໍາເປັນເພື່ອເຮັດໃຫ້ພາລະກິດນີ້ສໍາເລັດ. ກົດໝາຍວ່າດ້ວຍຄວາມເປັນສ່ວນຕົວຂອງລັດຖະບານກາງແລະຂອງລັດລະບຸວ່າພະແນກ ແລະສູນເຣຈິນັລບໍ່ສາມາດເປີດເຜີຍຂໍ້ມູນກ່ຽວກັບທ່ານໄດ້ໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ ເວັ້ນເສຍແຕ່ວ່າຈະມີກົດໝາຍອື່ນທີ່ອະນຸຍາດໃຫ້ເຂົາເຈົ້າເປີດເຜີຍໄດ້.

**ຂໍ້ມູນສໍາຄັນ**:
ເອກະສານຂໍ້ເທັດຈິງສະບັບນີ້ໃຫ້ພາບລວມກ່ຽວກັບສິດທິຕາມກົດໝາຍໃນການຮັກສາຄວາມເປັນສ່ວນຕົວຂອງທ່ານ. ກົດໝາຍລະບຸເຖິງສະຖານະການບາງຢ່າງທີ່ອາດຈະສາມາດເປີດເຜີຍຂໍ້ມູນຂອງທ່ານໄດ້. ກະລຸນາເບິ່ງ ປະກາດວ່າດ້ວຍແນວທາງປະຕິບັດດ້ານຄວາມເປັນສ່ວນຕົວ ສໍາລັບລາຍການທີ່ຄົບຖ້ວນກ່ຽວກັບວິທີການນໍາໃຊ້ແລະເປີດເຜີຍຂໍ້ມູນຂອງທ່ານ ແລະວິທີທີ່ທ່ານຈະສາມາດເຂົ້າເຖິງຂໍ້ມູນຂອງທ່ານ.

---

## ☑ DDS ແລະສູນເຣຈິນັລໃຊ້ຂໍ້ມູນສ່ວນບຸຄຄົນຂອງຂ້າພະເຈົ້າແນວໃດ?

DDS ແລະສູນເຣຈິນັລຈະຕ້ອງໃຫ້ປະກາດວ່າດ້ວຍແນວທາງປະຕິບັດດ້ານຄວາມເປັນສ່ວນຕົວແກ່ທ່ານ.[i] ປະກາດສະບັບນີ້ແຈ້ງໃຫ້ທ່ານຮູ້ວ່າຂໍ້ມູນສ່ວນບຸຄຄົນຂອງທ່ານຈະຖືກນໍາໃຊ້ ແລະເປີດເຜີຍແນວໃດ. ປະກາດສະບັບນີ້ແຈ້ງໃຫ້ທ່ານຮູ້ວ່າບຸຄຄົນໃດອາດຈະເຫັນຂໍ້ມູນຂອງທ່ານ, ສິດຕ່າງໆຂອງທ່ານແມ່ນຫຍັງແດ່ ແລະສາມາດຮ້ອງຮຽນໄດ້ບ່ອນໃດ. ສາມາດເບິ່ງປະກາດຂອງ DDS ວ່າດ້ວຍແນວທາງປະຕິບັດດ້ານຄວາມເປັນສ່ວນຕົວໄດ້ທີ່ນີ້: ປະກາດວ່າດ້ວຍແນວທາງປະຕິບັດດ້ານຄວາມເປັນສ່ວນຕົວ.

## ☑ ບຸຄຄົນໃດທີ່ສາມາດເຂົ້າເຖິງຂໍ້ມູນສ່ວນບຸຄຄົນຂອງຂ້າພະເຈົ້າໄດ້?

DDS ແລະສູນເຣຈິນັລຕ້ອງຮ້ອງຂໍການອະນຸຍາດເປັນລາຍລັກອັກສອນຈາກທ່ານກ່ອນທີ່ເຂົາເຈົ້າຈະສາມາດເປີດເຜີຍຂໍ້ມູນສ່ວນບຸຄຄົນຂອງທ່ານໃຫ້ກັບຜູ້ອື່ນໄດ້ ເວັ້ນເສຍແຕ່ວ່າຈະມີກົດໝາຍທີ່ອະນຸຍາດໃຫ້ເປີດເຜີຍໄດ້ ເຊັ່ນ: ເພື່ອຈຸດປະສົງໃນການປິ່ນປົວ, ການຈ່າຍເງິນ, ຫຼືການດໍາເນີນການດູແລສຸຂະພາບ ຫຼືເມື່ອກົດຫມາຍກໍານົດໃຫ້ມີການເປີດເຜີຍຂໍ້ມູນ.[ii]

ການອະນຸຍາດເປັນລາຍລັກອັກສອນຂອງທ່ານໃນການເປີດເຜີຍຂໍ້ມູນບາງຄັ້ງເອີ້ນວ່າ "ການອະນຸຍາດ." ການອະນຸຍາດຕ້ອງລະບຸວ່າຂໍ້ມູນໃດທີ່ສາມາດເປີດເ

ຜີຍໄດ້, ໃຫ້ແກ່ບຸຄຄົນໃດ ແລະເພື່ອຈຸດປະສົງໃດ. ທ່ານມີສິດທີ່ຈະເວົ້າວ່າ "ບໍ່" ໂດຍບໍ່ຕ້ອງຢ້ານກົວແຮງກົດດັນ ຫຼືການຕອບໂຕ້. ທ່ານມີສິດທີ່ຈະປ່ຽນໃຈໄດ້ທຸກເວລາ ແລະຮຽກຄືນຄຳອະນຸຍາດເປັນລາຍລັກອັກສອນຂອງທ່ານໄດ້.[iii]

### ☑ ຂ້າພະເຈົ້າສາມາດເຫັນຂໍ້ມູນກ່ຽວກັບຕົນເອງໃນບັນທຶກຂອງຂ້າພະເຈົ້າໄດ້ບໍ?

ທ່ານສາມາດຂໍອ່ານຫຼືເຮັດສຳເນົາຂໍ້ມູນຂອງທ່ານໃນບັນທຶກຂອງທ່ານກັບ DDS ແລະສູນເຣຈິນັລໄດ້. ທ່ານສາມາດສົ່ງຄຳຂໍຮັບບັນທຶກ DDS ຂອງທ່ານໄດ້ທີ່ລິ້ງຕໍ່ໄປນີ້: ຄຳຮ້ອງຂໍບັນທຶກ. ທ່ານຈະຈຳເປັນຈະຕ້ອງຕິດຕໍ່ກັບສູນເຣຈິນັລຂອງທ່ານໂດຍກົງຖ້າທ່ານຕ້ອງການທີ່ຈະເຂົ້າເຖິງຫຼືເຮັດສຳເນົາບັນທຶກຈາກສູນເຣຈິນັລຂອງທ່ານ.

ຖ້າຄຳຮ້ອງຂໍຂອງທ່ານຖືກປະຕິເສດ ເຈົ້າຈະຕ້ອງແຈ້ງໃຫ້ຮູ້ເຖິງສາເຫດ. ມີຂັ້ນຕອນໃຫ້ທ່ານຂໍຮັບການທົບທວນອີກຄັ້ງຖ້າຄຳຮ້ອງຂໍຂອງທ່ານຖືກປະຕິເສດ.[iv]

### ☑ ຂ້າພະເຈົ້າຈະແກ້ໄຂຂໍ້ມູນໃນບັນທຶກຂອງຂ້າພະເຈົ້າໄດ້ແນວໃດ?

ທ່ານສາມາດຮ້ອງຂໍໃຫ້ DDS ແລະສູນເຣຈິນັລປ່ຽນແປງຂໍ້ມູນກ່ຽວກັບທ່ານໃນບັນທຶກຂອງທ່ານຖ້າທ່ານເຊື່ອວ່າຂໍ້ມູນນັ້ນບໍ່ຖືກຕ້ອງ ຫຼືຄົບຖ້ວນ. DDS ແລະສູນເຣຈິນັລອາດຈະປະຕິເສດຄຳຮ້ອງຂໍຂອງທ່ານ. ຖ້າເກີດຂຶ້ນເຫດການນີ້ຂຶ້ນ ທ່ານສາມາດເພີ່ມຄຳຖະແຫຼງໃນແຟ້ມຂອງທ່ານເພື່ອອະທິບາຍຂໍ້ມູນໄດ້.[v] ທ່ານສາມາດຊອກຫາແບບຟອມເພື່ອຮ້ອງຂໍການປ່ຽນແປງບັນທຶກ DDS ຂອງທ່ານໄດ້ທີ່ນີ້: ຄຳຮ້ອງຂໍແກ້ໄຂຂໍ້ມູນ ສ່ວນບຸກຄົນ. ທ່ານຈະຕ້ອງຕິດຕໍ່ກັບສູນເຣຈິນັລຂອງທ່ານໂດຍກົງຖ້າທ່ານຕ້ອງການປ່ຽນແປງຂໍ້ມູນກັບສູນເຣຈິນັລຂອງທ່ານ.

### ☑ DDS ຫຼືສູນເຣຈິນັລໄດ້ໃຫ້ຂໍ້ມູນສ່ວນບູຄຄົນຂອງຂ້າພະເຈົ້າກັບບູຄຄົນອື່ນບໍ?

ທ່ານມີສິດສອບຖາມ DDS ແລະສູນເຣຈິນັລຂອງທ່ານວ່າບຸຄຄົນໃດທີ່ໄດ້ຮັບຂໍ້ມູນສ່ວນບຸຄຄົນຂອງທ່ານ.[vi] ເຊິ່ງເອີ້ນວ່າ "ການທຳບັນຊີການເປີດເຜີຍຂໍ້ມູນ." ບັນຊີນີ້ຈະຕ້ອງປະກອບດ້ວຍວັນທີເປີດເຜີຍ, ຊື່ຂອງບຸຄຄົນທີ່ໄດ້ຮັບຂໍ້ມູນ, ຂໍ້ມູນໃດທີ່ຖືກເປີດເຜີຍ ແລະຈຸດປະສົງໃນການເປີດເຜີຍ.[vii] ມີຂໍ້ຍົກເວັ້ນບາງຢ່າງສຳລັບຂໍ້ກຳນົດນີ້ ເຊັ່ນ: ການເປີດເຜີຍທີ່ທ່ານຮ້ອງຂໍ ຫຼືເພື່ອຈຸດປະສົງໃນການປິ່ນປົວ, ການຈ່າຍເງິນ ຫຼືການດຳເນີນການດູແລສຸຂະພາບ.[viii] ຖ້າທ່ານຕ້ອງການບັນຊີການເປີດເຜີຍຂໍ້ມູນຈາກ DDS ກະລຸນາສົ່ງອີເມວໄປທີ່ privacyofficer@dds.ca.gov.

### ☑ ຂ້າພະເຈົ້າຈະເຮັດແນວໃດຖ້າຂ້າພະເຈົ້າເຊື່ອວ່າ DDS ຫຼືສູນເຣຈິນັລໄດ້ລະເມີດກົດໝາຍນີ້?

ຖ້າທ່ານມີຂໍ້ກັງວົນວ່າ DDS ຫຼືສູນເຣຈິນັລແຫ່ງໃດແຫ່ງຫນຶ່ງໄດ້ລະເມີດກົດໝາຍໃນການຈັດການຂໍ້ມູນຂອງທ່ານ DDS ມີຫຼາຍທາງເລືອກໃຫ້ທ່ານຍື່ນຄຳຮ້ອງຮຽນ ເຊິ່ງສາມາດເບິ່ງໄດ້ທີ່ນີ້: ການອຸທອນ ແລະ ຄຳຮ້ອງຮຽນ.

ຖ້າທ່ານເຂົ້າຮັບການປິ່ນປົວໃນສູນ Porterville Developmental Center ຫຼື Canyon Springs Community Facility ແລະຮູ້ສຶກວ່າສະຖານທີ່ດັ່ງກ່າວໄດ້ລະເມີດກົດຫມາຍກ່ຽວກັບຄວາມເປັນສ່ວນຕົວຫຼືຄວາມລັບຂອງຂໍ້ມູນສ່ວນບຸຄຄົນຂອງທ່ານ ທ່ານສາມາດຍື່ນຄຳຮ້ອງຮຽນຕໍ່ພະແນກສາທາລະນະສຸກລັດຄາລິຟໍເນຍໄດ້ທີ່ HIPAA/Privacy Complaint form.

ທ່ານຍັງມີສິດທີ່ຈະຮ້ອງຮຽນຕໍ່ຫ້ອງການສິດທິພົນລະເມືອງຂອງລັດຖະບານກາງກ່ຽວກັບການລະເມີດກົດໝາຍສຸຂະພາບຂອງລັດຖະບານກາງທີ່ອາດຈະເກີດຂຶ້ນກ່ຽວກັບຄວາມເປັນສ່ວນຕົວ ຫຼືຄວາມລັບຂອງຂໍ້ມູນສ່ວນບຸຄຄົນຂອງທ່ານ:

[ພໍ່ທັລຊ່ວຍເຫຼືອໃນການຮ້ອງຮຽນດ້ານສິດທິພົນລະເມືອງ]().

ກົດໝາຍຂອງລັດຄາລິຟໍເນຍໃຫ້ສິດແກ່ທ່ານໃນການຮ້ອງຟ້ອງເພື່ອຮຽກຄ່າເສຍຫາຍໃນກໍລະນີທີ່ເປັນການລະເມີດກົດໝາຍຂອງລັດ ແລະຄວາມເປັນສ່ວນຕົວຂອງຂໍ້ມູນສຸຂະພາບ.[ix]

☑ **ເອກະສານຂໍ້ເທັດຈິງນີ້ໃຊ້ໄດ້ກັບຂ້າພະເຈົ້າບໍ ເຖິງແມ່ນວ່າຂ້າພະເຈົ້າຈະບໍ່ແມ່ນພົນລະເມືອງສະຫະລັດ ອາເມຣິກາກໍ່ຕາມ?**

ແມ່ນແລ້ວ ສິດທິເຫຼົ່ານີ້ນຳໃຊ້ກັບບຸຄຄົນທຸກຄົນທີ່ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກສູນເຣຈິນັລ ແລະຄອບຄົວຂອງເຂົາເຈົ້າ ໂດຍບໍ່ຄຳນຶງເຖິງສະຖານະການເຂົ້າເມືອງຂອງເຂົາເຈົ້າ. ພາຍໃຕ້ກົດລະບຽບທີ່ອອກໂດຍກະຊວງຄວາມໝັ້ນຄົງພາຍໃນປະເທດ (Homeland Security) ລົງວັນທີ 8 ກັນຍາ 2022, ຄົນທີ່ບໍ່ແມ່ນພົນລະເມືອງທີ່ໄດ້ຮັບສິດປະໂຫຍດດ້ານສຸຂະພາບ ຫຼືສິດປະໂຫຍດອື່ນໆທີ່ເຂົາເຈົ້າມີສິດໄດ້ຮັບຄວາມຊ່ວຍເຫຼືອຈະບໍ່ໄດ້ຮັບຜົນກະທົບດ້ານການເຂົ້າເມືອງໃນທາງທີ່ເສຍຫາຍຍ້ອນການໄດ້ຮັບການດູແລສຸຂະພາບ ຫຼືສິດປະໂຫຍດດັ່ງກ່າວ.[x]

☑ **ຂໍ້ມູນການເຂົ້າເມືອງຂອງຂ້າພະເຈົ້າຈະຖືກແບ່ງປັນກັບລັດຖະບານກາງບໍ?**

DDS ແລະສູນເຣຈິນັລຈະບໍ່ເປີດເຜີຍຂໍ້ມູນການເຂົ້າເມືອງຂອງທ່ານກັບອົງການຂອງລັດຖະບານກາງ. ຢ່າງໃດກໍ່ຕາມ ພວກເຮົາອາດຈະຖືກບັງຄັບໃຫ້ເຮັດແນວນັ້ນຖ້າກົດໝາຍຫຼືຄຳສັ່ງຂອງສານກຳນົດໃຫ້ເປີດເຜີຍ.

☑ **ຂໍ້ມູນການດູແລສຸຂະພາບການຈະເລີນພັນຂອງຂ້າພະເຈົ້າຈະຖືກເປີດເຜີຍສຳລັບການສືບສວນບໍ?**

DDS ແລະສູນເຣຈິນັລຈະບໍ່ນຳໃຊ້ ຫຼືເປີດເຜີຍຂໍ້ມູນຂອງທ່ານສຳລັບການສືບສວນທາງອາຍາ, ທາງແພ່ງ ຫຼືທາງປົກຄອງ ເພື່ອການກະທຳພຽງເພື່ອສະແຫວງຫາ, ໄດ້ຮັບ, ຈັດຫາ ຫຼືອຳນວຍຄວາມສະດວກໃນການດູແລສຸຂະພາບການຈະເລີນພັນ ເຊິ່ງການດູແລສຸຂະພາບດັ່ງກ່າວຖືເປັນເລື່ອງຖືກກົດໝາຍພາຍໃຕ້ສະຖານະການທີ່ໄດ້ຮັບ ເວັ້ນເສຍແຕ່ວ່າຈະຖືກບັງຄັບໃຫ້ຕ້ອງເຮັດເຊັ່ນນັ້ນຕາມກົດຫມາຍຫຼືຄຳສັ່ງຂອງສານ.[xi]

☑ **ມີຊັບພະຍາກອນເພີ່ມເຕີມທີ່ອາດຈະຊ່ວຍໃຫ້ຂ້າພະເຈົ້າເຂົ້າໃຈສິດທິຄວາມເປັນສ່ວນຕົວຂອງຂ້າພະເຈົ້າເໜືອຂໍ້ມູນສ່ວນບຸຄຄົນຂອງຂ້າພະເຈົ້າບໍ?**

- ໜ້ານະໂຍບາຍຂອງ DDS ວ່າດ້ວຍຄວາມເປັນສ່ວນຕົວ: [https://www.dds.ca.gov/general/privacy-policy/](https://www.dds.ca.gov/general/privacy-policy/)
- ປະກາດຂອງ DDS ວ່າດ້ວຍແນວທາງປະຕິບັດກ່ຽວກັບຄວາມເປັນສ່ວນຕົວ: [DS-5310 ປະກາດສຳລັບຜູ້ບໍລິໂພກ ແນວທາງປະຕິບັດກ່ຽວກັບຄວາມເປັນສ່ວນຕົວ 20230905.docx]()
- ແບບຟອມ DDS ຄຳຮ້ອງຂໍການເຂົ້າເຖິງ ແລະ/ຫຼື ເຮັດສຳເນົາຂໍ້ມູນສ່ວນບຸຄຄົນຂອງທ່ານ: [ຄຳຮ້ອງຂໍເພື່ອ ການເຂົ້າເຖິງ ແລະ/ຫຼືເຮັດສຳເນົາຂໍ້ມູນບຸຄຄົນ (DS 5410)]() ຫຼື ຢູ່ໃນລິ້ງຕໍ່ໄປນີ້: [ຄຳຮ້ອງຂໍຮັບ ບັນທຶກ]()
- ແບບຟອມຄຳຮ້ອງ DDS ຂໍແກ້ໄຂຂໍ້ມູນສ່ວນບຸຄຄົນຂອງທ່ານ: [ຄຳຮ້ອງຂໍແກ້ໄຂຂໍ້ມູນ ສ່ວນບຸຄຄົນ (DS 5210)]()
- ພະແນກຍຸຕິທຳລັດຄາລິຟໍເນຍ: [ຊັບພະຍາກອນກ່ຽວກັບຄວາມເປັນສ່ວນຕົວຂອງຜູ້ບໍລິໂພກ]()

**ເອກະສານຂໍ້ເທັດຈິງນີ້ແມ່ນມີໄວ້ເພື່ອຈຸດປະສົງໃນການໃຫ້ຂໍ້ມູນຂ່າວສານ ແລະບໍ່ຄວນຕີຄວາມວ່າເປັນຄໍາແນະນໍາທາງກົດໝາຍ ຫຼືເປັນນະໂຍບາຍຂອງລັດຄາລິຟໍເນຍ. ເອກະສານນີ້ອີງໃສ່ກົດຫມາຍທີ່ອ້າງເຖິງ ຕາມທີ່ມີຜົນບັງຄັບໃຊ້ໃນເດືອນທັນວາ ປີ 2024.**

**ຖ້າທ່ານຕ້ອງການຄໍາແນະນໍາກ່ຽວກັບປະເດັນໃດຫນຶ່ງ ທ່ານຄວນປຶກສາທະນາຍຄວາມ ຫຼືຜູ້ຊ່ຽວຊານອື່ນໆ. ນີ້ແມ່ນລາຍຊື່ບໍລິການທາງດ້ານກົດໝາຍ ທີ່ໄດ້ຮັບທຶນສະໜັບສະໜູນຈາກລັດ ແລະ ທະນາຍຄວາມ ດ້ານການເຂົ້າເມືອງ.**

**ສາມາດເຮັດສໍາເນົາເອກະສານຂໍ້ເທັດຈິງນີ້ໄດ້ຖ້າ: (1) ຄວາມໝາຍຂອງຂໍ້ຄວາມທີ່ເຮັດສໍາເນົາໄວ້ນັ້ນບໍ່ມີການປ່ຽນແປງ ຫຼື ບິດເບືອນ (2) ຂໍມອບເຄຣດິດໃຫ້ກັບພະແນກບໍລິການດ້ານພັດທະນາການລັດຄາລິຟໍເນຍ ແລະ (3) ສໍາເນົາທັງໝົດຈະຖືກແຈກຢາຍໂດຍບໍ່ເສຍຄ່າ.**

---

[i] ແຈ້ງໃຫ້ຊາບກ່ຽວກັບແນວທາງປະຕິບັດດ້ານຄວາມເປັນສ່ວນຕົວ: 45 CFR ¤ 164.520; ສາມາດຄົ້ນຫາປະກາດຂອງ DDS ວ່າດ້ວຍແນວທາງປະຕິບັດກ່ຽວກັບຄວາມເປັນສ່ວນຕົວໄດ້ທີ່ນີ້: DS-5310 ປະກາດສໍາລັບຜູ້ບໍລິໂພກວ່າດ້ວຍແນວທາງປະຕິບັດກ່ຽວກັບຄວາມເປັນສ່ວນຕົວ 20230905.docx.

[ii] ກ່ຽວກັບການອະນຸຍາດແລະການນໍາໃຊ້ ແລະການເປີດເຜີຍໂດຍບໍ່ໄດ້ຮັບອະນຸຍາດ: 45 CFR ¤¤ 164.506, 164.508, and 164.512; ປະມວນກົດໝາຍວ່າດ້ວຍສະຫວັດດີການແລະສະຖາບັນລັດຄາລິຟໍເນຍ,¤ 4514.

[iii] ອົງປະກອບຂອງການອະນຸຍາດທີ່ຖືກຕ້ອງ: 45 CFR ¤ 164.508; ປະມວນກົດໝາຍວ່າດ້ວຍສະຫວັດດີການແລະສະຖາບັນລັດຄາລິຟໍເນຍ ມາດຕາ 4514.

[iv] ສິດທິໃນການເຂົ້າເຖິງ: 45 CFR ¤ 164.524; ປະມວນກົດໝາຍແພ່ງລັດຄາລິຟໍເນຍ ¤¤ 1798.32, 1798.34; California Health & Safety Code ¤ 123140

[v] ສິດໃນການແກ້ໄຂ: 45 CFR ¤ 164.526; California Civil Code ¤ 1798.35

[vi] ສິດໃນການຂໍຮັບບັນຊີການເປີດເຜີຍຂໍ້ມູນ: 45 CFR ¤ 164.528(a); ປະມວນກົດໝາຍແພ່ງລັດຄາລິຟໍເນຍ ¤¤ 1798.25 ແລະ 1798.28

[vii] ອົງປະກອບຂອງການທໍາບັນຊີການເປີດເຜີຍຂໍ້ມູນ: 45 CFR ¤ 164.528(b); ປະມວນກົດໝາຍແພ່ງລັດຄາລິຟໍເນຍ ¤¤ 1798.25 ແລະ 1798.28

[viii] ຂໍ້ຍົກເວັ້ນໃນການເປີດເຜີຍບັນຊີການເປີດເຜີຍຂໍ້ມູນ: 45 CFR ¤ 164.528(a); ປະມວນກົດໝາຍແພ່ງລັດຄາລິຟໍເນຍ ¤¤ 1798.25 ແລະ 1798.28

[ix] ການແກ້ໄຂຢ່ອຍາ: ປະມວນກົດໝາຍແພ່ງລັດຄາລິຟໍເນຍ ¤¤ 1798.45- 1798.57; ປະມວນກົດໝາຍວ່າດ້ວຍສະຫວັດດີການແລະສະຖາບັນລັດຄາລິຟໍເນຍ ¤ 4518

[x] ກົດລະບຽບໃໝ່ເຮັດກໍານົດໄວ້ຊັດເຈນວ່າບຸກຄົນທີ່ບໍ່ແມ່ນພົນລະເມືອງ ເຊິ່ງໄດ້ຮັບສິດປະໂຫຍດດ້ານສຸຂະພາບ ຫຼືສິດປະໂຫຍດອື່ນໆຕາມທີ່ເຂົາເຈົ້າ ມີສິດຈະບໍ່ໄດ້ຮັບຜົນກະທົບດ້ານການເຂົ້າເມືອງ ໃນທາງທີ່ເສຍຫາຍ | HHS.gov

[xi] ກົດລະບຽບຂໍ້ບັງຄັບລັດຖະບານກາງ 2024-08503 (Federal Register 2024-08503) - ກົດລະບຽບວ່າດ້ວຍຄວາມເປັນສ່ວນຕົວ HIPAA ເພື່ອສະໜັບສະໜູນຄວາມເປັນສ່ວນຕົວໃນການດູແລສຸຂະພາບການຈະເລີນພັນ